# ຮັບການຊ່ວຍເຫຼືອດ້ວຍຄຳຖາມການສຶກສາພິເສດ

## ບົດນຳ

ທີມ IEP ຮັບຜິດຊອບໃນການຕັດສິນໃຈທີ່ສຳຄັນຫຼາຍຢ່າງກ່ຽວຂ້ອງກັບການສຶກສາຂອງນັກຮຽນທີ່ມີຄວາມພິການ. ໃນເກືອບທຸກກໍລະນີ, ທີມເຫຼົ່ານີ້ສາມາດຕົກລົງເຫັນດີເປັນເອກະພາບກັນໄດ້ຢ່າງສຳລັບຜົນໃນໂຄງການສຶກສາບຸກຄົນ (IEP) ທີ່ເຮັດໃຫ້ນັກຮຽນສາມາດໄດ້ຮັບການສຶກສາຂອງລັດທີ່ເໝາະສົມບໍ່ເສຍຄ່າ (FAPE).

ເຖິງແນວໃດກໍຕາມ, ມີຫຼາຍຄັ້ງເມື່ອທີມບໍ່ສາມາດເຫັນດີເປັນເອກະພາບນຳກັນ ແລະ ເຮັດໃຫ້ຂໍ້ຂັດແຍ້ງເກີດຂຶ້ນ. ODE ສົ່ງເສີມໃຫ້ພໍ່ແມ່ ແລະ ຜູ້ສຶກສາເຮັດວຽກຮ່ວມກັນເພື່ອແກ້ໄຂຄວາມກັງວົນກ່ຽວຂ້ອງກັບໂຄງການສຶກສາພິເສດຂອງນັກຮຽນ, ແຕ່ເຂົ້າໃຈວ່າມີຫຼາຍຄັ້ງເມື່ອຈຳເປັນຕ້ອງມີການສະໜັບສະໜູນເພີ່ມເຕີມ. ODE ໃຫ້ຫຼາຍທາງເລືອກເພື່ອຊ່ວຍພໍ່ແມ່ ແລະ ເຂດໂຮງຮຽນນຳທາງຫາຄວາມຂັດແຍ້ງກ່ຽວກັບການສຶກສາພິເສດ. ODE ຍັງມີຜູ້ຊ່ຽວຊານທີ່ໄດ້ຮັບມອບໝາຍໃຫ້ແຕ່ລະເຂດໂຮງຮຽນຜູ້ທີ່ພ້ອມຊ່ວຍທ່ານໃຫ້ເຂົ້າໃຈສິດຂອງທ່ານ ແລະ ຂະບວນການເຫຼົ່ານີ້, ຖ້າທ່ານຕ້ອງການຄວາມຊ່ວຍເຫຼືອໃນການນຳທາງຫາທາງເລືອກຂອງທ່ານ.

## ການຮັບຄວາມຊ່ວຍເຫຼືອ

**1. ລົມກັບອາຈານຂອງລູກທ່ານ**
ເຖິງແມ່ນວ່າແຕ່ລະເຂດໂຮງຮຽນຢູ່ໃນລັດໂອເຣກອນມີສະພາບທີ່ເປັນເອກະລັກຂອງຕົນເອງ, ໂດຍທົ່ວໄປແລ້ວພໍ່ແມ່ ແລະ ສະມາຊິກໃນຄອບຄົວຄວນລົມກັບອາຈານຂອງລູກທ່ານກ່ອນເພື່ອຂໍຄວາມຊ່ວຍເຫຼືອ. ໂດຍສ່ວນໃຫຍ່, ອາຈານຂອງເດັກນ້ອຍມີສິ່ງທີ່ດີທີ່ສຸດເພື່ອແກ້ໄຂຂໍ້ກັງວົນຕາມທີ່ພວກມັນເກີດຂຶ້ນ.

**2. ເຮັດວຽກກັບຜູ້ຈັດການເລື່ອງ**
ນັກຮຽນຫຼາຍຄົນຜູ້ໄດ້ຮັບບໍລິການສຶກສາພິເສດຍັງມີຜູ້ຈັດການເລືອກທີ່ໂຮງຮຽນຂອງພວກເຂົາມອບໝາຍໃຫ້ນຳ. ບຸກຄົນນີ້ມັກຈະເປັນອາຈານສອນພິເສດຂອງເດັກນ້ອຍຢູ່ສະເໝີ. ຜູ້ຈັດການເລື່ອງຮັບຜິດຊອບສຳລັບການເຮັດວຽກຜ່ານຂະບວນການ IEP ກັບທີມ IEP ສຳລັບນັກຮຽນຂອງພວກເຂົາ. ຖ້າອາຈານໃນຫ້ອງຮຽນຂອງລູກທ່ານບໍ່ສາມາດແກ້ໄຂຄວາມກັງວົນໃຈຂອງທ່ານໄດ້, ຜູ້ຈັດການເລື່ອງການສຶກສາພິເສດອາດຈະສາມາດຊ່ວຍໄດ້.

**3. ແກ້ໄຂບັນຫາກັບຝ່າຍບໍລິຫານໂຮງຮຽນ**
ໂດຍທົ່ວໄປໂຮງຮຽນຍັງມີຜູ້ບໍລິຫານທີ່ເປັນພື້ນຖານຂອງໂຮງຮຽນ (ຕົວຢ່າງ: ຜູ້ອຳນວຍການ, ຮອງອຳນວຍການ) ຜູ້ທີ່ຮັບຜິດຊອບຕໍ່ການຮັບປະກັນການດຳເນີນວຽກງານປະຈຳວັນຂອງໂຮງຮຽນທີ່ມີປະສິດທິພາບ. ໃນກໍລະນີທີ່ອາຈານບໍ່ສາມາດແກ້ໄຂຄວາມກັງວົນຂອງຄອບຄົວໄດ້, ການນຳຂອງໂຮງຮຽນມັກຈະຊ່ວຍໄດ້.

**4. ຂໍການສະໜັບສະໜູນຈາກຫ້ອງການປະຈຳເມືອງ**
ເມື່ອພະນັກງານໃນໂຮງຮຽນບໍ່ສາມາດແກ້ໄຂຄວາມກັງວົນຂອງທ່ານໄດ້, ໂດຍທົ່ວໄປແມ່ນມີລະດັບເຂດອື່ນຕິດຕາມກວດກາຜ່ານຫ້ອງການສູນກາງ. ທັງຫ້ອງການສຶກສາສະເພາະ, ເຊິ່ງອາດຈະຖືກເອີ້ນວ່າຝ່າຍບໍລິການນັກຮຽນ ຫຼື ຊື່ຄ້າຍຄືກັນອື່ນໆ ແລະ ຫ້ອງການພະນັກງານຊີ້ນຳຂອງເຂດໂຮງຮຽນໃນທ້ອງຖິ່ນຂອງທ່ານຈະສາມາດຊ່ວຍທ່ານແກ້ໄຂຂໍ້ກັງວົນໃຈຂອງທ່ານຢູ່ສະເໝີເມື່ອພະນັກງານໃນໂຮງຮຽນບໍ່ສາມາດແກ້ໄຂໄດ້.

**5. ເຮັດວຽກກັບສູນຝຶກອົບຮົມພໍ່ແມ່ ແລະ ຂໍ້ມູນຂອງລັດໂອເຣກອນ**
ລັດໂອເຣກອນບໍາລຸງຮັກສາສູນຝຶກອົບຮົມພໍ່ແມ່ ແລະ ຂໍ້ມູນ (PTI) ຜ່ານ FACT Oregon. FACT Oregon ໃຫ້ການຊ່ວຍເຫຼືອເຊິ່ງກັນແລະກັນ, ການຝຶກອົບຮົມ ແລະ ຊັບພະຍາກອນໃຫ້ມີຄວາມພ້ອມ ແລະ ໃຫ້ອໍານາດແກ່ຄອບຄົວ, ຫັນປ່ຽນວິທີທີ່ພວກເຂົາເຫັນຄວາມພິການ ແລະ ຊ່ວຍພວກເຂົາມີຄວາມຄາດຫວັງສູງ ແລະ ຝັນເຖິງຄວາມຝັນທີ່ຍິ່ງໃຫຍ່ສໍາລັບລູກຂອງພວກເຂົາ. ພະນັກງານຈາກ FACT Oregon ໃຫ້ການສະໜັບສະໜູນແກ່ຄອບຄົວເພື່ອນໍາທາງກວດເບິ່ງຄວາມພິການ ແລະ ການສຶກສາພິເສດ. PTI ຂອງໂອເຣກອນມີຫຼາຍວິທີສໍາລັບພໍ່ແມ່ ແລະ ຄອບຄົວໃຫ້ໄດ້ຮັບການສະໜັບສະໜູນ, ລວມທັງການໂທ ຫຼື ການສົ່ງຂໍ້ຄວາມຫາເບີ 503-786-6082 ຫຼື 541-695-5416, ອີເມວຫາ support@factoregon.org, ກໍານົດເວລາການໂທຜ່ານທາງເວັບໄຊຂອງພວກເຂົາ.

**6. ຕິດຕໍ່ກັບຫ້ອງການເພີ່ມໂອກາດຂອງນັກຮຽນຢູ່ທີ່ພະແນກສຶກສາລັດໂອຣກອນ**
ກະລຸນາຢ່າລັງເລທີ່ຈະເຂົ້າຫາພະນັກງານໃນຫ້ອງການເພີ່ມໂອກາດຂອງນັກຮຽນເພື່ອຮັບເອົາການຊ່ວຍເຫຼືອ. ທ່ານສາມາດເຂົ້າເຖິງພວກເຮົາຜ່ານທາງອີເມວໄດ້ທີ່ ode.specialeducationquestions@ode.oregon.gov ຫຼື ຜ່ານທາງໂທລະສັບທີ່ເບີ 503-947-5600. ກະລຸນາໃຫ້ແນ່ໃຈວ່າໄດ້ລວມເອົາເຂດໂຮງຮຽນຂອງລູກທ່ານເຂົ້ານໍາເພື່ອຊ່ວຍພວກເຮົາເຊື່ອຕໍ່ທ່ານກັບສະມາຊິກພະນັກງານທີ່ເໝາະສົມ. ອີກຢ່າງໜຶ່ງ, ທ່ານສາມາດສົ່ງຄໍາຂໍການຊ່ວຍເຫຼືອຈາກ ODE ໄດ້ຢູ່ບ່ອນນີ້.

## ຂໍ້ມູນເພີ່ມເຕີມ

ຂໍ້ມູນເພີ່ມເຕີມກ່ຽວກັບສິດຂອງພໍ່ແມ່ຂອງນັກຮຽນທີ່ມີຄວາມພິການແມ່ນມີໃຫ້ຢູ່ໃນ Procedural Safeguards (ການຄຸ້ມຄອງລະບຽບການ).

ຂໍ້ມູນເພີ່ມເຕີມກ່ຽວກັບຕົວເລືອກການແກ້ໄຂຂໍ້ຂັດແຍ່ງແມ່ນມີໃຫ້ຢູ່ທີ່ເວັບໄຊແກ້ໄຂຂໍ້ຂັດແຍ່ງຂອງ ODE.